ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

ສຳນັກງານນາຍົກລັດຖະມົນຕີ

ເລກທີ່ 207 /ນຍ

ນະຄອນຫລວງວຽງຈັນ, ວັນທີ່ 27. 07. 2007.

# ດຳລັດ

# ວ່າດ້ວຍການກວດກາສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ ແລະ ຂົນສົ່ງຜ່ານ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ່ 02/ສພຊ, ລົງວັນທີ່ 06 ພຶດສະພາ 2003..
- ອີງຕາມກົດໝາຍ ວ່າດ້ວຍກະສິກຳ ສະບັບເລກທີ່ 01/98 ສພຊ, ລົງວັນທີ່ 10/10/1998.
- ອີງຕາມໜັງສືສະເໜີ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເລກທີ່ /ກປ, ລົງວັນທີ່

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ, ວິທີການ ແລະ ມາດຕະການໃນການຄຸ້ມຄອງ ແລະ ກວດກາທາງດ້ານສັດຕະວະແພດ ສຳລັບການເຄື່ອນຍ້າຍສັດມີຊີວິດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ ແລະ ຂົນສົ່ງຜ່ານດິນແດນ ຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເພື່ອປ້ອງກັນ ແລະ ສະກັດກັ້ນພະຍາດຕິດແປດຮ້າຍແຮງ ຫລື ພະຍາດລະບາດສັດ ທັງເປັນການປ້ອງກັນສຸຂະພາບຂອງຄົນ ແລະ ສັດ.

**ມາດຕາ 2. ຄວາມໝາຍຂອງຄຳສັບ**

ດຳລັດສະບັບນີ້ ໄດ້ຈຳກັດຄວາມໝາຍ ຂອງບັນດາຄຳສັບ ໄວ້ດັ່ງນີ້:

- "ສັດ" ໝາຍເຖິງ ສັດລ້ຽງລູກດ້ວຍນ້ຳນົມ ເຊັ່ນ: ຊ້າງ, ມ້າ, ລໍ, ລາ, ງົວ, ຄວາຍ, ໝູ, ແກະ, ແບ້, ໝາ ແລະ ແມວ, ສັດປີກ, ສັດເລືອຄານ ລວມທັງສັດປ່າ.

- "ຜະລິດຕະພັນສັດ" ໝາຍເຖິງ ຜົນຜະລິດຈາກສັດ ຊຶ່ງໄດ້ແກ່ທຸກພາກສ່ວນ ທີ່ໄດ້ມາຈາກໂຕສັດ ເຊັ່ນ: ຊີ້ນ, ນົມ, ໄຂ່, ໜັງ, ເຂົາ, ກະດູກ, ເລືອດ, ຫົວ, ຕີນ, ເຄື່ອງໃນ, ໄຂມັນ, ຂົນ ແລະ ເລັບ.
- "ຜະລິດຕະພັນສິນຄ້າກ່ຽວກັບສັດ" ໝາຍເຖິງ ສັດມີຊີວິດປະເພດຕ່າງໆ, ຜະລິດຕະພັນທີ່ມີຕົ້ນກຳເນີດມາຈາກສັດ, ນ້ຳເຊື້ອ, ຕົວອ່ອນໃນທ້ອງ, ຈຸລັງໄຂ່, ຜະລິດຕະພັນທາງດ້ານຊີວະແລະພະຍາດວິທະຍາ, ອາຫານສັດ ແລະ ຊີ້ນສ່ວນຈາກສັດ ເພື່ອໃຊ້ທາງການຢາ.
- "ຜູ້ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ" ໝາຍເຖິງ ບຸກຄົນ ຫລືນິຕິບຸກຄົນ ຜູ້ທີ່ຮັບຜິດຊອບຕໍ່ຜະລິດຕະພັນສິນຄ້າກ່ຽວກັບສັດ ເພື່ອຂາຍ ແລະມີພັນທະປະຕິບັດຕາມ ການກວດກາທີ່ກຳນົດໄວ້ ໃນດຳລັດສະບັບນີ້.
- "ຈຸດດ່ານຊາຍແດນ" ໝາຍເຖິງ ສະໜາມບິນ ຫລືທ່າເຮືອ, ສະຖານີລົດໄຟ ຫລືຈຸດດ່ານກວດກາຕາມເສັ້ນທາງ ທີ່ເປີດຄ້າ-ຂາຍຜະລິດຕະພັນສິນຄ້າກ່ຽວກັບສັດຢ່າງເປັນທາງການ ລະຫວ່າງປະເທດ ເປັນບ່ອນທີ່ສາມາດປະຕິບັດການກວດກາການນຳເຂົ້າ ດ້ານສັດຕະວະແພດ.
- "ການນຳເຂົ້າ" ໝາຍເຖິງ ການນຳເອົາຜະລິດຕະພັນສິນຄ້າກ່ຽວກັບສັດ ນຳເຂົ້າມາຈໍລະຈອນແຈກຢາຍ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ຢູ່ພາຍໃນປະເທດ.
- "ການກວດກາເອກະສານ" ໝາຍເຖິງ ການກວດກາບັນດາເອກະສານ ທີ່ຢັ້ງຢືນດ້ານສັດຕະວະແພດ ຫລືເອກະສານ ທີ່ນຳມາກັບຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມທີ່ໄດ້ກຳນົດໄວ້.
- "ການກວດກາດ້ານວັດຖຸ" ໝາຍເຖິງ ການກວດກາຜະລິດຕະພັນສິນຄ້າກ່ຽວກັບສັດ ຊຶ່ງລວມເອົາການ ກວດກາການຫຸ້ມຫໍ່, ກວດກາອຸນຫະພູມ, ການເກັບຕົວຢ່າງ, ການກວດສອບທາງຫ້ອງວິໄຈ ຫລື ການກວດກາອື່ນໆ ໃນລະຫວ່າງການກັກຂັງສັດຊົ່ວຄາວ.
- "ການກວດກາຄວາມຖືກຕ້ອງ" ໝາຍເຖິງ ການກວດກາຄວາມຖືກຕ້ອງ ຂອງເອກະສານ ທີ່ອົງການຄຸ້ມຄອງສັດຕະວະແພດກຳນົດໄວ້ ໃຫ້ຖືກຕ້ອງກັບຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ໄດ້ແຈ້ງ ຕົວຈິງ.
- "ເຈົ້າໜ້າທີ່ກວດກາສັດຕະວະແພດ" ໝາຍເຖິງ ພະນັກງານສັດຕະວະແພດ ຫລື ພະນັກງານວິຊາການ ທີ່ໄດ້ຖືກແຕ່ງຕັ້ງຢ່າງເປັນທາງການ ເພື່ອດຳເນີນການກວດກາສຸກຂະພາບສັດ, ກວດກາອະນາໄມຜະລິດຕະພັນສັດ ແລະ ເປັນຜູ້ອອກໃບຢັ້ງຢືນການກວດກາຕາມລະບຽບການ.
- "ອົງການຄຸ້ມຄອງສັດຕະວະແພດ" ໝາຍເຖິງ ຂະແໜງການຂອງລັດ ທີ່ມີອຳນາດໃນການຄຸ້ມຄອງວຽກງານບໍລິການສັດຕະວະແພດ ໃນຂອບເຂດທົ່ວປະເທດ.

ມາດຕາ 3. ຂອບເຂດການນຳໃຊ້

ດຳລັດສະບັບນີ້ ມີຜົນບັງຄັບປະຕິບັດ ສຳລັບທຸກສຳນັກງານ, ອົງການຂອງລັດ, ກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ກຸ່ມລ້ຽງສັດ, ສະມາຄົມລ້ຽງສັດ, ສະຫະກອນ, ບຸກຄົນ ຫລືນິຕິບຸກຄົນ ທີ່ພົວພັນເຖິງການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ ແລະຂົນສົ່ງຜ່ານດິນແດນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ.

ມາດຕາ 4. ການຮ່ວມມືກັບສາກົນ

ລັດສົ່ງເສີມ ໃຫ້ມີການເປີດກ້ວາງ ການຮ່ວມມືກັບສາກົນ ກ່ຽວກັບການແລກປ່ຽນບົດຮຽນ, ການຝຶກອົບຮົມ, ການກໍ່ສ້າງພະນັກງານ, ການຊ່ວຍເຫລືອໃນຂົງເຂດວຽກງານດ້ານສັດຕະວະແພດ ກ່ຽວກັບການຄຸ້ມຄອງກວດກາການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າ ກ່ຽວກັບສັດ.

## ໝວດທີ 2
## ການກວດກາ ການນຳເຂົ້າ ແລະຂົນສົ່ງຜ່ານສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ

ມາດຕາ 5. ປະເພດຜະລິດຕະພັນສິນຄ້າກ່ຽວກັບສັດ

ປະເພດຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ ແລະຂົນສົ່ງຜ່ານດິນແດນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງໄດ້ກວດກາດ້ານສັດຕະວະແພດ ຢູ່ຕາມດ່ານຊາຍແດນ ມີດັ່ງນີ້:

1. ສັດມີຊີວິດ ປະກອບດ້ວຍ ງົວ, ຄວາຍ, ຊ້າງ, ມ້າ, ລໍ, ລາ, ແກະ, ແບ້, ກະຕ່າຍ, ໝາ ແລະ ແມວ, ສັດປີກ, ສັດເລືອຄານ ລວມທັງສັດປ່າ.
2. ຜະລິດຕະພັນທີ່ມີຕົ້ນກຳເນີດຈາກສັດເພື່ອການບໍລິໂພກຂອງຄົນ ປະກອບດ້ວຍ: ຊີ້ນສັດ, ຕີນ, ປີກ, ເຄື່ອງໃນ, ຜະລິດຕະພັນຊີ້ນ, ເອັນ, ໄຂ່, ຜະລິດຕະພັນໄຂ່, ນົມ, ຜະລິດຕະພັນນົມ, ນ້ຳເຜີ້ງສຳລັບບໍລິໂພກ.
3. ຜະລິດຕະພັນທີ່ມີຕົ້ນກຳເນີດຈາກສັດ ເພື່ອໃຊ້ເປັນອາຫານສັດ ຫລື ອຸດສາຫະກຳ.
4. ອາຫານ ແລະຫຍ້າແຫ້ງສຳລັບສັດ.
5. ຢາ ແລະວັກຊີນສຳລັບສັດ.
6. ຜະລິດຕະພັນຊີວະວິທະຍາ ທີ່ມີຕົ້ນກຳເນີດຈາກສັດ.
7. ຜະລິດຕະພັນຊີວະວິທະຍາ ທີ່ນຳໃຊ້ ເຂົ້າໃນການລ້ຽງສັດ.

ມາດຕາ 6. ພັນທະຜູ້ທີ່ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ

ພັນທະຜູ້ທີ່ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ມີຕົ້ນກຳເນີດມາຈາກຕ່າງປະເທດ ເຂົ້າສູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງປະຕິບັດດັ່ງນີ້:

1. ຕ້ອງຂໍອະນຸຍາດນຳເຂົ້າປະເທດ ຕາມຈຸດດ່ານຊາຍແດນ ຈາກອົງການຄຸ້ມຄອງສັດຕະວະແພດ.
2. ຜະລິດຕະພັນສິນຄ້າຈາກສັດ ທີ່ຂົນສົ່ງມານັ້ນ ຕ້ອງໄດ້ຜ່ານການກວດກາຕາມຂັ້ນຕອນດ້ານສັດຕະວະແພດ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ກ່ອນການນຳເຂົ້າສູ່ປະເທດແຕ່ລະຄັ້ງ.

3. ຕ້ອງແຈ້ງເອກະສານກ່ຽວກັບ ຜະລິດຕະພັນສິນຄ້າກ່ຽວກັບສັດຂອງຕົນ ຕໍ່ອົງການ**ຄຸ້ມຄອງສັດ**ຕະວະແພດ (ກະຊວງກະສິກຳ ແລະ ປ່າໄມ້) ແລະ ແຈ້ງຕໍ່ເຈົ້າໜ້າທີ່ກວດກາສັດຕະວະແພດປະຈຳດ່ານ ລ່ວງໜ້າ 1 ວັນ ກ່ອນມີການຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດດັ່ງກ່າວ ເພື່ອກວດກາດ້ານສັດຕະວະແພດ ຢູ່ຈຸດດ່ານຊາຍແດນ ທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າປະເທດ.
4. ເຈົ້າໜ້າທີ່ພາກສ່ວນກ່ຽວຂ້ອງ ທີ່ປະຈຳຢູ່ຈຸດດ່ານຊາຍແດນ ອະນຸຍາດຢັ້ງຢືນຜ່ານຕາມຂັ້ນຕອນທີ່ຖືກຕ້ອງຢ່າງເປັນທາງການໄດ້ ກໍ່ຕໍ່ເມື່ອໄດ້ປະຕິບັດຕາມເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ໜ້າທີ່ 2 ຂອງມາດຕານີ້.

## ມາດຕາ 7. ການກວດກາດ້ານສັດຕະວະແພດ

ຜະລິດຕະພັນສິນຄ້າກ່ຽວກັບສັດທີ່ຈະນຳເຂົ້າປະເທດແຕ່ລະຄັ້ງ ຕ້ອງໄດ້ຜ່ານການກວດກາໂດຍເຈົ້າໜ້າທີ່ກວດກາສັດຕະວະແພດ ຢູ່ຈຸດດ່ານຊາຍແດນ ຊຶ່ງປະກອບດ້ວຍ: ການກວດກາເອກະສານ, ການກວດກາດ້ານວັດຖຸ ແລະການກວດກາຄວາມຖືກຕ້ອງ. ການກວດກາລະອຽດມີດັ່ງນີ້:

1. ການກວດກາເອກກະສານ ແມ່ນການກວດກາລາຍລະອຽດ ກ່ຽວກັບຂໍ້ມູນຂອງຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ໄດ້ລະບຸໄວ້ ໃນໃບຢັ້ງຢືນ ຫລື ເອກະສານ, ຂໍ້ມູນດັ່ງກ່າວ ຕ້ອງໃຫ້ກົງກັນກັບຂໍ້ມູນທີ່ໄດ້ແຈ້ງໄວ້ ຕາມມາດຕາ 6 ຂອງດຳລັດສະບັບນີ້ ແລະ ຢູ່ໃນອາຍຸການນຳໃຊ້ ຕາມທີ່ໄດ້ກຳນົດໄວ້ ໃນໃບຢັ້ງຢືນ ຫລືເອກະສານ.
2. ການກວດກາດ້ານວັດຖຸ ແມ່ນການກວດກາຜະລິດຕະພັນສິນຄ້າກ່ຽວກັບສັດ ໃຫ້ຖືກຕ້ອງຕາມມາດຕະຖານ ທີ່ອົງການຄຸ້ມຄອງສັດຕະວະແພດກຳນົດໄວ້ ແລະ ຖືກຕ້ອງຕາມຈຸດປະສົງ ທີ່ກຳນົດໄວ້ ໃນໃບຢັ້ງຢືນ ຫລື ເອກະສານ ຊຶ່ງປະກອບດ້ວຍ:
   - ການກວດກາຈາກຫ້ອງວິໄຈ.
   - ການວິເຄາະຈາກການເລືອກເກັບຕົວຢ່າງ.
   - ການນຳໃຊ້ມາດຕະການ ດ້ານການກັກຜະລິດຕະພັນສິນຄ້າກ່ຽວກັບສັດຊົ່ວຄາວ.
   - ສຳລັບສັດມີຊີວິດ ໃຫ້ລວມເອົາການກວດກາດ້ານສຸຂະພາບ ແລະ ອາການຂອງສັດ ໂດຍໃຫ້ຖືກ ຕ້ອງຕາມທີ່ກຳນົດໄວ້ ໃນເອກກະສານ ທີ່ຕິດຕາມມາພ້ອມກັບສັດ.
3. ການກວດກາຄວາມຖືກຕ້ອງ ແມ່ນການກວດກາ ດັ່ງນີ້:
   - ກວດກາທີ່ມາ ແລະ ແຫ່ລງກຳເນີດ ຂອງຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ, ເສັ້ນທາງຜ່ານ ຈົນເຖິງຈຸດໝາຍປາຍທາງ ຂອງຜະລິດຕະພັນສິນຄ້າກ່ຽວກັບສັດ.
   - ກວດກາທີ່ມາ, ແຫຼ່ງກຳເນີດ ແລະ ການບັນຈຸ ຂອງຜະລິດຕະພັນສິນຄ້າກ່ຽວກັບສັດ ໃຫ້ຖືກຕ້ອງຕາມເອກະສານ ທີ່ເຈົ້າໜ້າທີ່ກວດກາສັດຕະວະແພດທາງການ ຂອງປະເທດຕົ້ນທາງອອກໃຫ້.
   - ກວດກາ ກາປະທັບ ຫລື ເຄື່ອງໝາຍ ທີ່ບົ່ງບອກເຖິງແຫລ່ງທີ່ມາ ຂອງຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ໄດ້ລະບຸໄວ້ໃນເອກະສານ, ນອກຈາກນັ້ນ ຕ້ອງກວດກາເຄື່ອງໝາຍທີ່ຕິດ ຫລື

ໝາຍໃສ່ ພາຊະນະບັນຈຸ ຊຶ່ງຢັ້ງຢືນວ່າ ຜະລິດຕະພັນສິນຄ້າກ່ຽວກັບສັດ ໄດ້ຜ່ານການກວດກາຄວາມຖືກຕ້ອງ ຕາມລະບຽບການດ້ານສັດຕະວະແພດແລ້ວ.

ມາດຕາ 8. ໃບຢັ້ງຢືນການກວດກາດ້ານສັດຕະວະແພດ

ພາຍຫລັງທີ່ ເຈົ້າໜ້າທີ່ກວດກາສັດຕະວະແພດ ໄດ້ກວດກາຄົບຖ້ວນ ຕາມຫລັກການດ້ານສັດຕະວະແພດແລ້ວ, ເຈົ້າໜ້າທີ່ກວດກາສັດຕະວະແພດ ຕ້ອງອອກໃບຢັ້ງຢືນການກວດກາ ຕາມແບບຟອມ ທີ່ທາງການກຳນົດໄວ້ ໃຫ້ແກ່ຜູ້ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ຊຶ່ງປະກອບດ້ວຍລາຍລະອຽດ ຂອງຜົນການກວດກາທັງໝົດ ທີ່ກຳນົດໄວ້ໃນມາດຕາ 7 ຂອງດຳລັດສະບັບນີ້. ໃບຢັ້ງຢືນດັ່ງກ່າວ ຕ້ອງໄດ້ຕິດຕາມໄປກັບຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ເປັນເອກະສານອ້າງອີງທີ່ສຳຄັນ ໃຫ້ແກ່ການກວດກາ ຂອງເຈົ້າໜ້າທີ່ພາກສ່ວນກ່ຽວຂ້ອງ.

ໃນກໍລະນີ ທີ່ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມທີ່ໄດ້ລະບຸໄວ້ ໃນວັກ 1 ຂ້າງເທິງນັ້ນ ຫາກແຍກອອກຈາກກັນ ທຸກພາກສ່ວນຂອງຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ແຍກອອກນັ້ນ ຕ້ອງມີໃບຢັ້ງຢືນກຳກັບຕ່າງຫາກ.

ມາດຕາ 9. ການກຳນົດດ່ານກວດກາສັດຕະວະແພດຊາຍແດນ ແລະ ສະຖານທີ່ກັກຂັງສັດ

1. ດ່ານກວດກາສັດຕະວະແພດຊາຍແດນ ຕ້ອງຕັ້ງຢູ່ໃກ້ຄຽງກັບຈຸດນຳເຂົ້າ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະຕ້ອງເປັນເອກະພາບກັບເຈົ້າໜ້າທີ່ພາກສ່ວນທີ່ກ່ຽວຂ້ອງ. ສຳລັບສະຖານທີ່ ທີ່ມີບັນຫາທາງດ້ານລັກສະນະພູມສາດ ເປັນຕົ້ນ ແມ່ນທ່າເຮືອ ຫລື ເປັນທາງຜ່ານ ອາດຜ່ອນຜັນໃຫ້ຕັ້ງຢູ່ໃນຈຸດໃດໜຶ່ງ ທີ່ເໝາະສົມ ຈາກຈຸດນຳເຂົ້າຜະລິດຕະພັນສິນຄ້າກ່ຽວກັບສັດ.
2. ສະຖານທີ່ກັກຂັງສັດ ຕ້ອງມີມາດຕະຖານຕ່ຳສຸດ ດັ່ງນີ້:
   - ຕ້ອງມີສະຖານທີ່ກັກຂັງສັດພຽງພໍ, ມີແສງສະຫວ່າງ ແລະ ມີການລະບາຍອາກາດ ພຽງພໍ ແລະ ມີສິ່ງອຳນວຍຄວາມສະດວກຄົບຖ້ວນ ໃນການນຳເອົາສັດຂຶ້ນ ຫລືລົງຍານພາຫະນະ, ໃນການກວດກາ, ການໃຫ້ອາຫານ, ການໃຫ້ນ້ຳ ແລະ ການປິ່ນປົວພະຍາດ.
   - ຕ້ອງມີເຮືອນ ຫລືສິ່ງປຸກສ້າງພຽງພໍ ສຳລັບພະນັກງານທີ່ເຮັດວຽກ, ມີສະຖານທີ່ກວດກາ, ມີຫ້ອງປ່ຽນ ຖ່າຍເຄື່ອງນຸ່ງ ແລະຫ້ອງນ້ຳເປັນຕົ້ນ.
   - ຕ້ອງມີຫ້ອງ ແລະສິ່ງອຳນວຍຄວາມສະດວກ ໃນການເກັບ ແລະ ກະກຽມຕົວຢ່າງ ສຳລັບກວດກາປົກກະຕິ ຫລືໃນກໍລະນີສຸກເສີນ ຕາມການກຳນົດ ຂອງອົງການຄຸ້ມຄອງສັດຕະວະແພດ.
   - ຕ້ອງມີບ່ອນທຳລາຍຊາກສົບສັດ ຫລືສິ່ງເສດເຫລືອຈາກສັດ.
   - ຕ້ອງມີລະບົບຕິດຕໍ່ສື່ສານ ທີ່ສາມາດສົ່ງຂ່າວ ແລະແລກປ່ຽນຂໍ້ມູນຂ່າວສານ ກັບດ່ານກວດກາສັດຕະວະແພດອື່ນໆ ຫລື ການຈັດຕັ້ງຂອງຕົນ ຢ່າງທັນການ.
   - ຕ້ອງມີເຄື່ອງມື ແລະ ສານເຄມີ ສຳລັບການອະນາໄມ ແລະຂ້າເຊື້ອ.
   - ຕ້ອງຢູ່ຫ່າງໄກ ຈາກສະຖານທີ່ລ້ຽງສັດ ຫລື ບ່ອນກັກຂັງສັດລ້ຽງ ຂອງປະຊາຊົນ.

- ຕ້ອງມີລະບົບຄຸ້ມຄອງ ທີ່ມີປະສິດທິພາບ ເພື່ອຮັບປະກັນການຄວບຄຸມ ແລະ ເອົາໃຈໃສ່ລະວັງພະຍາດສັດ.

3. ດ່ານກວດກາສັດຕະວະແພດຊາຍແດນ ແລະ ສະຖານທີ່ກັກຂັງສັດ ຕ້ອງບໍລິຫານ ແລະ ຄຸ້ມຄອງ ໂດຍເຈົ້າໜ້າທີ່ກວດກາສັດຕະວະແພດ ທີ່ມີຄວາມສາມາດໃນການກວດກາ ແລະໃຫ້ການຝຶກອົບຮົມ ແກ່ພະນັກງານຊ່ວຍວຽກຂອງຕົນ.

ມາດຕາ 10. ການນຳເຂົ້າຜະລິດຕະພັນສິນຄ້າກ່ຽວກັບສັດ

ຜູ້ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ອະນຸຍາດໃຫ້ນຳເຂົ້າຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງປະຕິບັດດັ່ງນີ້:

1. ຕ້ອງມີເອກະສານຢັ້ງຢືນ ຈາກອົງການຄຸ້ມຄອງສັດຕະວະແພດຂອງລັດ ຈາກປະເທດຕົ້ນທາງ ເປັນພາສາຝຣັ່ງ ຫລື ພາສາອັງກິດ ທີ່ຖືກຕ້ອງ ແລະຄົບຖ້ວນ ຕາມລະບຽບການດ້ານສັດຕະວະແພດທີ່ກຳນົດໄວ້ ແລະ ເອກະສານດັ່ງກ່າວຕ້ອງເກັບຮັກສາໄວ້ ໃນຈຸດດ່ານກວດກາສັດຕະວະແພດຊາຍແດນ ບ່ອນທີ່ນຳເຂົ້າຜະລິດຕະພັນສິນຄ້າກ່ຽວກັບສັດ.
2. ຕ້ອງໄດ້ຜ່ານການກວດກາຄວາມຖືກຕ້ອງ ແລະການກວດກາ ດ້ານເຕັກນິກຄົບຖ້ວນ.
3. ເຈົ້າໜ້າທີ່ພາກສ່ວນກ່ຽວຂ້ອງປະຈຳດ່ານ ອະນຸຍາດໃຫ້ນຳຜະລິດຕະພັນສິນຄ້າກ່ຽວກັບສັດເຂົ້າມາໃນປະເທດໄດ້ ກໍຕໍ່ເມື່ອຜະລິດຕະພັນສິນຄ້າກ່ຽວກັບສັດ ໄດ້ຮັບການຢັ້ງຢືນການກວດກາດ້ານສັດຕະວະແພດ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ໃນບາງກໍລະນີ ຜູ້ຮັບຜິດຊອບຕໍ່ການຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງໄດ້ເສັຽຄ່າທຳນຽມໃນການກວດກາເພີ່ມຕື່ມ.
4. ຜະລິດຕະພັນສິນຄ້າກ່ຽວກັບສັດທີ່ນຳເຂົ້າ ຫາກຖືກຕ້ອງຄົບຖ້ວນຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້, ເຈົ້າໜ້າທີ່ກວດກາສັດຕະວະແພດ ຕ້ອງສຳເນົາເອກະສານຢັ້ງຢືນສະບັບຕົ້ນ ທີ່ຕິດຕາມມາກັບຜະລິດຕະພັນສິນຄ້າກ່ຽວກັບສັດນັ້ນໄວ້ ແລະ ໂດຍອີງຕາມ ມາດຕາ 8 ຂອງດຳລັດສະບັບນີ້, ເຈົ້າໜ້າທີ່ກວດກາສັດຕະວະແພດ ຕ້ອງເປັນຜູ້ອອກໃບຢັ້ງຢືນການກວດກາ ຢ່າງເປັນທາງການເພື່ອກຳກັບຜະລິດຕະພັນສິນຄ້າກ່ຽວກັບສັດທຸກຄັ້ງ.

ມາດຕາ 11. ການຂົນສົ່ງຜ່ານຜະລິດຕະພັນສິນຄ້າກ່ຽວກັບສັດ.

1. ຜູ້ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ອະນຸຍາດໃຫ້ຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:
   - ຜະລິດຕະພັນສິນຄ້າກ່ຽວກັບສັດ ບໍ່ໄດ້ມາຈາກປະເທດ ທີ່ທາງການຫ້າມນຳເຂົ້າ ຫລື ຂົນສົ່ງຜ່ານ, ອົງການຄຸ້ມຄອງສັດຕະວະແພດ ອະນຸຍາດໃຫ້ມີການຂົນສົ່ງຜ່ານໄດ້ ໃນກໍລະນີ ທີ່ນຳຜະລິດຕະພັນສິນຄ້າກ່ຽວກັບສັດ ຈາກເຄື່ອງບິນລຳໜຶ່ງ ໄປສູ່ເຄື່ອງບິນອີກລຳໜຶ່ງ ຫລື ຈາກພາຫະນະບັນຈຸຕູ້ໜຶ່ງ ໄປສູ່ອີກຕູ້ໜຶ່ງ ພາຍໃນດ່ານກວດກາ ຂອງທ່າເຮືອ ຫລື ສະໜາມບິນດຽວກັນ. ໃນກໍລະນີ ທີ່ຈຳເປັນ ຕ້ອງໄດ້ຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ກັບຄືນ

ຫ້າມບໍ່ໃຫ້ຂົນຍ້າຍຜະລິດຕະພັນສິນຄ້າກ່ຽວກັບສັດລົງ ຫລືປຸ່ນຖ່າຍພາຫານະຂົນສົ່ງ ຢູ່ໃນພື້ນແຜ່ນດິນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງເດັດຂາດ.

- ຕ້ອງມີໃບຢັ້ງຢືນອະນຸຍາດໃຫ້ມີການຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງອອກໃຫ້ໂດຍເຈົ້າໜ້າທີ່ກວດກາສັດຕະວະແພດ ຂອງຈຸດດ່ານກວດກາ ທີ່ຜະລິດຕະພັນສິນຄ້າກ່ຽວກັບສັດມາເຖິງທຳອິດ.
- ໃນກໍລະນີ ມີການຍົກເລີກການຂົນສົ່ງຜ່ານ ຫລື ຕ້ອງໄດ້ທຳລາຍຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມທີ່ກຳນົດໄວ້ໃນດຳລັດສະບັບນີ້, ຜູ້ຮັບຜິດຊອບໃນການຂົນຖ່າຍຜະລິດຕະພັນສິນຄ້າກ່ຽວກັບສັດ ຂຶ້ນພາຫະນະ ຕ້ອງໄດ້ປະຕິບັດທັນທີທັນໃດ.

2. ການອະນຸຍາດ ຕາມຂໍ້ທີ່ 1 ຂອງມາດຕານີ້ໄດ້ ກໍ່ຕໍ່ເມື່ອຜະລິດຕະພັນສິນຄ້າກ່ຽວກັບສັດ ຄົບຖ້ວນ ຕາມເງື່ອນໄຂດັ່ງຕໍ່ໄປນີ້:
   - ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ຂົນສົ່ງຜ່ານ ຕ້ອງມີເອກະສານຖືກຕ້ອງ ແລະຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້.
   - ຕ້ອງນຳເຂົ້າຈຸດດ່ານ ຕາມທີ່ເອກະສານກຳນົດໄວ້ ແລະ ຕ້ອງໄດ້ຜ່ານການກວດກາ ຄວາມຖືກຕ້ອງ ແລະ ການກວດກາດ້ານເຕັກນິກ ຢ່າງຖືກຕ້ອງຄົບຖ້ວນ.
   - ການຂົນສົ່ງຜ່ານຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງໄດ້ປະຕິບັດຕາມການຊີ້ນຳ ແລະ ຖືກຕ້ອງຕາມກົດລະບຽບ ຂອງເຈົ້າໜ້າທີ່ພາກສ່ວນກ່ຽວຂ້ອງ ທີ່ດ່ານຂາອອກກຳນົດໄວ້ ແລະ ຕ້ອງມີເອກະສານ ແລະ ໃບຢັ້ງຢືນ ເຊິ່ງອອກໃຫ້ໂດຍເຈົ້າໜ້າທີ່ ໃນຈຸດດ່ານຂາເຂົ້າ.
   - ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ໄດ້ຜ່ານການກວດກາທຸກຂັ້ນຕອນ ຢູ່ໃນຈຸດດ່ານນຳເຂົ້າ ຕ້ອງບັນຈຸເຂົ້າພາຫານະບັນຈຸ ແລະ ຫຸ້ມຫໍ່ເປັນຢ່າງດີ ພາຍໃຕ້ການຄວບຄຸມຢ່າງໃກ້ສິດ ຂອງເຈົ້າໜ້າທີ່ກວດກາສັດຕະວະແພດ, ໃນລະຫວ່າງການຂົນສົ່ງ ຈາກດ່ານນຳເຂົ້າ ໄປຫາດ່ານສົ່ງອອກ ຫ້າມບໍ່ໃຫ້ຂົນຍ້າຍຜະລິດຕະພັນສິນຄ້າກ່ຽວກັບສັດ ອອກຈາກພາຫະນະບັນຈຸ ແຍກສ່ວນ ຫລື ກະທຳການໃດໆ ກັບຜະລິດຕະພັນສິນຄ້າກ່ຽວກັບສັດ ຢ່າງເດັດຂາດ.
   - ຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງໄດ້ນຳອອກຈາກປະເທດ ນັບຈາກມື້ ທີ່ກວດຜ່ານໃນຈຸດດ່ານນຳເຂົ້າ ຊ້າສຸດບໍ່ໃຫ້ເກີນ 30 ວັນ.
   - ເຈົ້າໜ້າທີ່ກວດກາສັດຕະວະແພດປະຈຳດ່ານ ທີ່ມີອຳນາດໃນການອະນຸຍາດ ໃຫ້ຂົນສົ່ງຜ່ານຜະລິດຕະພັນສິນຄ້າກ່ຽວກັບສັດ ຢູ່ຈຸດດ່ານນຳເຂົ້າ ຕ້ອງໄດ້ກຳນົດເສັ້ນທາງຂົນສົ່ງ ພ້ອມທັງລາຍງານ ໃຫ້ແກ່ເຈົ້າໜ້າທີ່ກວດກາສັດຕະວະແພດ ຢູ່ຈຸດດ່ານ ທີ່ຈະຂົນສົ່ງອອກຜະລິດຕະພັນສິນຄ້າກ່ຽວກັບສັດຮັບຊາບ ໂດຍທາງໂທລະສານ ຫລື ວິທີທີ່ເຫັນວ່າເໝາະສົມ.
   - ເຈົ້າໜ້າທີ່ກວດກາສັດຕະວະແພດປະຈຳດ່ານ ທີ່ຜະລິດຕະພັນສິນຄ້າກ່ຽວກັບສັດ ຂົນສົ່ງອອກ ຕ້ອງໄດ້ຢັ້ງຢືນໂດຍບັນທຶກໃສ່ເອກະສານທີ່ລະບຸໄວ້ໃນ ມາດຕາ 9 ວ່າ: ຜະລິດຕະພັນສິນຄ້າກ່ຽວກັບສັດ ໄດ້ຂົນສົ່ງອອກຈາກປະເທດແລ້ວ ແລະ ຕ້ອງສົ່ງສຳເນົາເອກະສານດັ່ງກ່າວ ກັບໄປຫາເຈົ້າໜ້າທີ່ກວດກາສັດຕະວະແພດ ຂອງຈຸດດ່ານທີ່ນຳເຂົ້າຜະລິດຕະພັນ

ສິນຄ້າກ່ຽວກັບສັດ ໂດຍທາງໂທລະສານ ຫລື ວິທີທີ່ເໝາະສົມ, ຖ້າຫາກເກີນ 30 ວັນ ເຈົ້າໜ້າທີ່ກວດກາສັດຕະວະແພດ ໃນຈຸດດ່ານທີ່ນຳເຂົ້າຜະລິດຕະພັນສິນຄ້າກ່ຽວກັບສັດ ບໍ່ໄດ້ຮັບການແຈ້ງການ ກ່ຽວກັບຜະລິດຕະພັນສິນຄ້າກ່ຽວກັບສັດຂົນສົ່ງອອກ ຈາກປະເທດ, ເຈົ້າໜ້າທີ່ກວດກາສັດຕະວະແພດ ໃນຈຸດດ່ານນຳເຂົ້າ ຕ້ອງໄດ້ສະເໜີຕໍ່ເຈົ້າໜ້າທີ່ພາກສ່ວນກ່ຽວຂ້ອງ ເພື່ອກວດກາ ຊອກຫາຈຸດໝາຍປາຍທາງແທ້ຈິງ ທີ່ຜະລິດຕະພັນສິນຄ້າກ່ຽວກັບສັດຖືກສົ່ງໄປ.

ມາດຕາ 12. ການຍົກເລີກ ການຂົນສົ່ງຜ່ານ ຜະລິດຕະພັນສິນຄ້າກ່ຽວກັບສັດ

1. ການສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ ເພື່ອຂົນສົ່ງຜ່ານ ແລະ ໄດ້ປະຕິບັດຕາມລະບຽບການ ທີ່ທາງການກຳນົດໄວ້ຄົບຖ້ວນແລ້ວ ແຕ່ໃນບາງກໍລະນີ ອາດພົບຄວາມຜິດປົກກະຕິ, ອົງການຄຸ້ມຄອງສັດຕະວະແພດ ຕ້ອງກັກຜະລິດຕະພັນສິນຄ້າກ່ຽວກັບສັດນັ້ນໄວ້, ຖ້າ ຈຳເປັນຕ້ອງຕັດສິນໃຫ້ສົ່ງກັບ ຫລືທຳລາຍ ຫລືຂ້າສັດ ຕາມທີ່ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້.
2. ຫາກກວດພົບຜະລິດຕະພັນສິນຄ້າກ່ຽວກັບສັດ ບໍ່ຖືກຕ້ອງຕາມເງື່ອນໄຂ ແລະລະບຽບການຂົນສົ່ງ ຫລືກໍລະນີສົງໄສ ສັດຕິດເຊື້ອພະຍາດຕິດແປດຮ້າຍແຮງ ຫລືພົບວ່າ ສັດບໍ່ຢູ່ໃນສະພາບ ທີ່ສາມາດຂົນສົ່ງຕໍ່ໄປໄດ້ ຕ້ອງປະຕິບັດມາດຕະການໃດໜຶ່ງ ດັ່ງນີ້ :

- ກັກສັດໄວ້ ເພື່ອໃຫ້ໄດ້ພັກຜ່ອນ, ໃຫ້ອາຫານ ແລະ ນ້ຳ ຫລື ຖ້າຈຳເປັນອາດມີການປິ່ນປົວ.
- ແຍກກັກຂັງໄວ້ ໃນສະຖານທີ່ກັກຂັງສັດ ຫລື ສະຖານທີ່ ແຍກຜະລິດຕະພັນສິນຄ້າກ່ຽວກັບສັດຕ່າງຫາກ.
- ໃນກໍລະນີ ມີການຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດກັບຄືນ ເຈົ້າໜ້າທີ່ກວດກາສັດຕະວະແພດ ຕ້ອງປະຕິບັດດັ່ງນີ້ :
  1) ລາຍງານ ໄປຍັງອົງການຄຸ້ມຄອງສັດຕະວະແພດ ຂອງປະເທດສົ່ງອອກ.
  2) ລຶບລ້າງ ອາຍຸການນຳໃຊ້ ຂອງໃບຢັ້ງຢືນດ້ານສັດຕະວະແພດ ທີ່ຕິດຕາມມາກັບຜະລິດຕະພັນສິນຄ້າກ່ຽວກັບສັດ ເພື່ອປ້ອງກັນ ບໍ່ໃຫ້ນຳເຂົ້າຈຸດດ່ານອື່ນໄດ້.
  3) ສົ່ງສິນຄ້າດັ່ງກ່າວກັບຄືນ ດ້ວຍພາຫານະຂົນສົ່ງ ແລະເສັ້ນທາງເດີມ ທີ່ສິນຄ້ານຳເຂົ້າມາ ໃນໄລຍະເວລາ ຊ້າສຸດບໍ່ໃຫ້ເກີນ 30 ວັນ, ການຂົນສົ່ງສິນຄ້າກັບຄືນນັ້ນ ຕ້ອງແມ່ນຜູ້ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ເປັນຜູ້ຮັບຜິດຊອບທັງໝົດ.
  4) ໃນກໍລະນີ ຜະລິດຕະພັນສິນຄ້າກ່ຽວກັບສັດ ຫາກບໍ່ສາມາດສົ່ງກັບ ພາຍໃນເວລາ 30 ວັນ ຜູ້ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງຍິນຍອມໃຫ້ທຳລາຍຜະລິດຕະພັນກ່ຽວກັບສັດ ໃນສະຖານທີ່ໆທາງການກຳນົດໃຫ້ ພາຍໃຕ້ການຄວບຄຸມຢ່າງໃກ້ສິດ ຂອງເຈົ້າໜ້າທີ່ກວດກາສັດຕະວະແພດ, ກໍລະນີທີ່ ຜະລິດຕະພັນສິນຄ້າກ່ຽວກັບສັດ ບໍ່ສາມາດກຳຈັດ ຫລືທຳລາຍທັນທີໄດ້ ຕ້ອງໄດ້ເກັບຮັກສາໄວ້ ໃນສະຖານ

ທີ່ໃດໜຶ່ງ ແລະ ຜູ້ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດນັ້ນ ຕ້ອງເປັນຜູ້ຮັບຜິດຊອບ ໃນການໃຊ້ຈ່າຍທັງໝົດ.

5) ໃນບາງກໍລະນີ ສັດມີຊີວິດ ບໍ່ສາມາດສົ່ງກັບໄດ້ ພາຍໃນ 30 ວັນ ແຕ່ເພື່ອບໍ່ໃຫ້ເປັນການທໍລະມານສັດ ເຈົ້າໜ້າທີ່ກວດກາສັດຕະວະແພດ ຕ້ອງອະນຸຍາດໃຫ້ນຳສັດ ໄປຂ້າເພື່ອບໍລິໂພກ ຫລືສັ່ງການໃຫ້ຂ້າ, ທຳລາຍ ຫລືກຳຈັດ ຕາມລະບຽບການດ້ານສັດຕະວະແພດ ທີ່ກຳນົດໄວ້.

3. ຜູ້ຮັບຜິດຊອບຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ຫລື ຕົວແທນນຳເຂົ້າ ຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍ ທີ່ກ່ຽວຂ້ອງທັງໝົດ ກ່ຽວກັບການປະຕິບັດມາດຕະການຕ່າງໆ ເຊັ່ນ: ການຂົນສົ່ງສັດກັບຄືນ, ການຂ້າທຳລາຍ, ການຂັງສັດຊົ່ວຄາວ ຫລືການແຍກປ່ຽວຜະລິດຕະພັນສິນຄ້າກ່ຽວກັບສັດ.

ມາດຕາ 13. ການສັ່ງໂຈະ ການນຳເຂົ້າ ແລະ ການຂົນສົ່ງຜ່ານຜະລິດຕະພັນສິນຄ້າກ່ຽວກັບສັດ

ໃນກໍລະນີ ທີ່ປະເທດຕົ້ນທາງ ທີ່ກ່ຽວຂ້ອງກັບຜະລິດຕະພັນສິນຄ້າກ່ຽວກັບສັດ ເກີດມີການລະບາດ ຂອງພະຍາດຕິດແປດຮ້າຍແຮງ ຫລືມີການຢັ້ງຢືນ ຈາກເຈົ້າໜ້າທີ່ກວດກາສັດຕະວະແພດປະຈຳດ່ານ ພົບພະຍາດຕິດແປດຮ້າຍແຮງດັ່ງກ່າວ ຢູ່ຈຸດດ່ານກວດກາສັດຕະວະແພດຊາຍແດນ ຊຶ່ງຈະກໍ່ໃຫ້ເກີດຜົນເສັຽຫາຍຕໍ່ຝູງສັດ, ສຸຂະພາບຂອງຄົນ ແລະ ເສດຖະກິດຂອງຊາດ ອົງການຄຸ້ມຄອງສັດຕະວະແພດ ຕ້ອງສັ່ງໂຈະການນຳເຂົ້າ ແລະຂົນສົ່ງຜ່ານຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ມາຈາກຂົງເຂດໃດໜຶ່ງ ຫລືທົ່ວປະເທດ ຂອງປະເທດຕົ້ນທາງ ຫລືປະເທດທາງຜ່ານ ທີ່ເຫັນວ່າກ່ຽວຂ້ອງກັບຜະລິດຕະພັນສິນຄ້າກ່ຽວກັບສັດນັ້ນຊົ່ວຄາວ ຈົນກ່ວາວ່າ ຈະໄດ້ຮັບການແກ້ໄຂ.

## ໝວດທີ 3
## ການຄຸ້ມຄອງ ແລະ ກວດກາ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ

ມາດຕາ 14. ອົງການຄຸ້ມຄອງສັດຕະວະແພດ

ອົງການຄຸ້ມຄອງສັດຕະວະແພດ ປະກອບດ້ວຍ :

- ຂັ້ນສູນກາງ ແມ່ນກະຊວງກະສິກຳ ແລະປ່າໄມ້ (ກົມລ້ຽງສັດ ແລະ ການປະມົງ)
- ຂັ້ນແຂວງ ແມ່ນພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນຫລວງ (ຂະແໜງລ້ຽງສັດ ແລະ ການປະມົງ)
- ຂັ້ນເມືອງ ແມ່ນຫ້ອງການກະສິກຳ ແລະປ່າໄມ້ເມືອງ (ໜ່ວຍງານລ້ຽງສັດ ແລະ ການປະມົງ)

ມາດຕາ 15. ພາລະບົດບາດ ຂອງອົງການຄຸ້ມຄອງສັດຕະວະແພດ

ພາລະບົດບາດ ຂອງອົງການຄຸ້ມຄອງສັດຕະວະແພດ ກ່ຽວກັບວຽກງານກວດກາສັດ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ຢູ່ຕາມຈຸດດ່ານຊາຍແດນທີ່ນໍາເຂົ້າ ສູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍແມ່ນກະຊວງກະສິກໍາ ແລະປ່າໄມ້ ເປັນຜູ້ຕິດຕາມ, ກວດກາ, ຕິດຕາມລະວັງ, ປ້ອງກັນ ແລະ ສະກັດກັ້ນ ການແຜ່ຂະຫຍາຍຂອງພະຍຸພະຍາດສັດຈາກພາຍນອກ ເຂົ້າສູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຮັບປະກັນໃຫ້ການຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ປະຕິບັດຕາມລະບຽບການທີ່ກໍານົດໄວ້.

ມາດຕາ 16. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງສັດຕະວະແພດຂັ້ນສູນກາງ

ອົງການຄຸ້ມຄອງສັດຕະວະແພດຂັ້ນສູນກາງ ມີສິດ ແລະ ໜ້າທີ່ຄວບຄຸມ, ກວດກາການນໍາເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ດັ່ງນີ້ :

1. ເປັນເສນາທິການໃຫ້ແກ່ລັດຖະບານ ໃນການຜັນຂະຫຍາຍຍຸດທະສາດ ກ່ຽວກັບວຽກງານຄວບຄຸມ, ກວດກາການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ຢູ່ຕາມຈຸດດ່ານຊາຍແດນ ທີ່ນໍາເຂົ້າ ຫລືຂົນສົ່ງຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ກາຍເປັນແຜນການ, ໂຄງການລະອຽດ ແລະ ລະບຽບການ.
2. ມີໜ້າທີ່ ໃນການຈັດຕັ້ງວາງແຜນປ້ອງກັນ ແລະ ສະກັດກັ້ນພະຍາດລະບາດສັດ ໂດຍວິທີການຄວບຄຸມ ກວດກາການເຄື່ອນຍ້າຍນໍາເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທັງສະເພາະໜ້າ ແລະ ຍາວນານ ໄວ້ຢ່າງຊັດເຈນ.
3. ກໍານົດລະບຽບການ, ບັນດາມາດຕະການລະດັບຊາດຕ່າງໆທີ່ຈໍາເປັນ ຫລື ເງື່ອນໄຂສະເພາະ, ເພື່ອຄວບຄຸມ, ກວດກາການນໍາເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ. ພ້ອມນັ້ນ ຕ້ອງຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ເປັນມາດຕະຖານດຽວກັນ ໃນຂອບເຂດທົ່ວປະເທດ.
4. ອອກຄໍາສັ່ງໃຫ້ໜ່ວຍງານທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດບັນດາມາດຕະການ ແລະ ຂໍ້ເກືອດຫ້າມທີ່ໄດ້ກໍານົດໄວ້ ພ້ອມທັງເປັນເຈົ້າການດູແລ, ຕິດຕາມ ແລະ ກວດກາ ຢ່າງເຂັ້ມງວດ
5. ສ້າງຮ່າງແຜນແມ່ບົດ, ແຜນໄລຍະຍາວ, ໄລຍະກາງ, ໄລຍະສັ້ນ ແລະ ບັນດາໂຄງການກ່ຽວກັບການຄວບຄຸມ, ກວດກາການນໍາເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ.
6. ສ້າງຕາໜ່າງ, ໜ່ວຍງານຕິດຕາມ ກວດກາ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບການຄວບຄຸມ, ກວດກາການນໍາເຂົ້າ ຫລື ຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດໃນທົ່ວປະເທດ.
7. ພົວພັນຮ່ວມມືກັບສາກົນໃນວຽກງານຄວບຄຸມ, ກວດກາການນໍາເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ການປ້ອງກັນ ແລະ ສະກັດກັ້ນພະຍາດລະບາດສັດ.

8. ພົວພັນປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ວຽກງານຄວບຄຸມ, ກວດກາການນຳເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ການປ້ອງກັນ ແລະ ສະກັດກັ້ນພະຍາດລະບາດສັດ ຢ່າງຖືກຕ້ອງ ທົ່ວເຖິງ ແລະ ເຂັ້ມງວດ.
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ລັດຖະບານມອບໝາຍໃຫ້ ແລະ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ.

ມາດຕາ 17. ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງສັດຕະວະແພດຂັ້ນແຂວງ ແລະ ນະຄອນຫລວງ

ອົງການຄຸ້ມຄອງສັດຕະວະແພດຂັ້ນແຂວງ ແລະ ນະຄອນຫລວງ ມີສິດ ແລະ ໜ້າທີ່ຄວບຄຸມ, ກວດກາການນຳເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າ ກ່ຽວກັບສັດ ດັ່ງນີ້ :

1. ເປັນເສນາທິການໂດຍກົງ ໃຫ້ອົງການຄຸ້ມຄອງສັດຕະວະແພດຂັ້ນສູນກາງ.
2. ຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄວບຄຸມ, ກວດກາການນຳເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ອົງການຄຸ້ມຄອງສັດຕະວະແພດຂັ້ນສູນກາງ ແລະ ຂອງຕົນວາງອອກ.
3. ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກ່ຽວກັບວຽກງານຄວບຄຸມ, ກວດກາການ ນຳເຂົ້າ ຫລື ຂົນສົ່ງຜ່ານສັດ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ, ການ ປ້ອງກັນ ແລະ ສະກັດກັ້ນພະຍາດລະບາດສັດ.
4. ຄຸ້ມຄອງ, ຕິດຕາມ, ກວດກາການນຳເຂົ້າ ຫລື ຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ, ປ້ອງກັນ ແລະ ສະກັດກັ້ນພະຍາດລະບາດສັດ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ
5. ແນະນຳ, ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການນຳເຂົ້າ ຫລື ຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ເພື່ອເປັນການປ້ອງກັນ ແລະສະກັດກັ້ນພະຍາດລະບາດສັດ ພ້ອມທັງຊຸກຍູ້ ຜູ້ນຳເຂົ້າ ຫລື ຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະ ລິດຕະພັນສິນຄ້າກ່ຽວກັບສັດ ໃຫ້ເອົາໃຈໃສ່ດູແລ ປະຕິບັດຕາມລະບຽບກົດໝາຍ ທີ່ກຳນົດໄວ້ ຢ່າງຖືກຕ້ອງ ທົ່ວເຖິງ ແລະ ເຂັ້ມງວດ.
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຕິດຕາມ, ກວດກາ ການນຳເຂົ້າ ຫລື ຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ເພື່ອເຮັດໃຫ້ລະບຽບການ ທີ່ກຳນົດອອກນັ້ນ ໄດ້ຖືກຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ.
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ.

ມາດຕາ 18. ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງສັດຕະວະແພດ ຂັ້ນເມືອງ

ອົງການຄຸ້ມຄອງສັດຕະວະແພດຂັ້ນເມືອງ ມີສິດ ແລະ ໜ້າທີ່ຄວບຄຸມ, ກວດກາການນໍາເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ດັ່ງນີ້ :

1. ເປັນເສນາທິການໂດຍກົງ ໃຫ້ອົງການຄຸ້ມຄອງສັດຕະວະແພດຂັ້ນແຂວງ, ນະຄອນຫລວງ ແລະ ອົງການປົກຄອງເມືອງ ໃນການຈັດຕັ້ງປະຕິບັດແຜນການ, ຂໍ້ກໍານົດ, ກົດລະບຽບ ແລະ ຄໍາແນະນໍາ ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫລວງ ດ້ານການຄວບຄຸມ, ກວດກາການນໍາເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າ ກ່ຽວກັບສັດ, ການປ້ອງກັນ ແລະ ສະກັດກັ້ນພະຍາດລະບາດສັດ.
2. ຈັດຕັ້ງປະຕິບັດຕົວຈິງ ແຜນການໄລຍະຍາວ, ໄລຍະກາງ, ໄລຍະສັ້ນ ແລະ ໂຄງການຕ່າງໆ ກ່ຽວກັບວຽກງານຄວບຄຸມ, ກວດກາການນໍາເຂົ້າ ຫລືຂົນສົ່ງສັດຜ່ານ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ການປ້ອງກັນ ແລະ ສະກັດກັ້ນພະຍາດລະບາດສັດ.
3. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍ ແລະ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

ມາດຕາ 19. ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງກະສິກໍາ ແລະປ່າໄມ້ ສົມທົບ ກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 20. ຜົນສັກສິດ

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບດໍາລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ